ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ



ສໍານັກງານໃຫຍ່

ເລກທີ: 1182 /ທຄຕລ 2022

ນະຄອນຫຼວງວຽງຈັນ, ວັນທີ: 16 JUN 2022

## ໜັງສືແຈ້ງເຊີນ

**ເຖິງ:** ບໍລິສັດ ຈັດຈໍາໜ່າຍ ກໍ້ເຈ້ຍຣັດປອກເງິນ ແລະ ບັນດາໂຮງພິມ ພາຍໃນ ນະຄອນຫຼວງວຽງຈັນ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ກໍ້ເຈ້ຍຣັດປອກເງິນ ຂະໜາດ 100 ແມັດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ກໍ້ເຈ້ຍຣັດປອກເງິນ ຂະໜາດ 100 ແມັດ ຈໍານວນ 600 ແກັດ ເພື່ອນໍາໃຊ້ເຂົ້າໃນວຽກງານຂອງ ທຄຕລ ລາຍລະອຽດສິນຄ້າ ມີດັ່ງຕາຕະລາງລຸ່ມນີ້:

| ຮູບກໍ້ເຈ້ຍຣັດປອກເງິນ |
|---|
|  |
| **ລາຍລະອຽດ** |
| - ກໍ້ເຈ້ຍກາວຣັດປອກເງິນ: ຍາວ 100 ແມັດ/ກໍ້, ຂະໜາດ 20 * 76 ມມ, ແກນຮອບໃນ 7,9 ຊມ ແລະ ແກນຮອບນອກ 11 ຊມ.<br>- ການຫຸ້ມຫໍ່: ຈໍານວນ 40 ກໍ້/ແກັດ "ພ້ອມລະບຸລາຍລະອຽດສິນຄ້າດ້ານນອກກ່ອງ" ສິນຄ້າຮັບປະກັນ ໄລຍະ 06 ເດືອນ. |

- **ເງື່ອນໄຂຂອງບໍລິສັດ, ໂຮງພິມພາກລັດ ແລະ ເອກະຊົນ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**
- **ເອກະສານ ຊອງທີ1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດດ້ານສິ່ງພິມ, ດໍາເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ສໍາເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021.
2. ບັນດາໂຮງພິມທີ່ສົນໃຈເຂົ້າຮ່ວມປະມູນແມ່ນຕ້ອງສະເໜີລາຍການ ທີ່ຕ້ອງການເຂົ້າຮ່ວມປະມູນ ແລະ ໃຫ້ລະບຸລະອຽດ: ຂະໜາດ ຄຸນນະພາບ, ຍີ່ຫໍ້ວັດສະດຸ, ກໍານົດເວລາຈັດສົ່ງສິນຄ້າ, ການຮັບປະກັນສິນຄ້າແຕ່ລະລາຍການໃຫ້ຊັດເຈນ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້ ແລະ ຍື່ນກ່ອນ ວັນຈັນ ວັນທີ 20/06/2022 ເວລາ 11:00 ໂມງ ໂດຍການສົ່ງຟາຍເຂົ້າ E-mail: bidcommittee@bcel.com.la

3. ກໍານົດຍື່ນລາຍລະອຽດສິນຄ້າ, ການຮັບປະກັນສິນຄ້າ ແລະ ກໍານົດຍື່ນຊອງຕົວຢ່າງກໍ້ເຈ້ຍ ມາພ້ອມຢ່າງໜ້ອຍຕົວຢ່າງລະ 1 ກໍ້ (ສາມາດມາເບິ່ງຕົວຢ່າງທີ່ ທຄຕລ ໄດ້) ຈະຕ້ອງມາສົ່ງທີ່ ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່, ປ່ອງບໍລິການຂາອອກ-ຂາເຂົ້າ ຕຶກ C ຊັ້ນ 4.

➢ **ເອກະສານ ຊອງທີ່2:**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.

2. ໃນວັນສຸກ ວັນທີ 24/06/2022 ເວລາ 09:30 ໂມງ ແຈ້ງໃຫ້ບໍລິສັດ, ໂຮງພິມພາກລັດ ແລະ ເອກະຊົນ ຈະຕ້ອງຖືຊອງລາຄາມາສົ່ງທີ່ ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່, ປ່ອງບໍລິການຂາອອກ-ຂາເຂົ້າ ຕຶກ C ຊັ້ນ 4.

**ໝາຍເຫດ:** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.

❖ **ເງື່ອນໄຂຂອງສັນຍາ ລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທໍານຽມຈົດທະບຽນສັນຍາ.
- ຖ້າຜູ້ຊະນະການປະມູນປະຕິເສດການສັ່ງຊື້, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ການຊໍາລະແມ່ນຈ່າຍເງິນງວດດຽວ 100% ຂອງຕາມມູນຄ່າຕົວຈິງ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍພາຍໃນໄລຍະ 20 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຜູ້ມີຄວາມສົນໃຈ ຍື່ນຊອງເຂົ້າຮ່ວມການປະມູນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອໍານວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ຄໍາພຸດ ສິດທິລາດ